ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ ໒໒໒ /ຈທວ.ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 21 ຕຸລາ 2014

ເຖິງ: ເຈົ້າຂອງວິສາຫະກິດທີ່ກ່ຽວຂ້ອງ, ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ

ເລື່ອງ: ແຈ້ງໂຈະການດຳເນີນທຸລະກິດຖາວອນ (ຊື່ເກົ່າ: ທະນາຄານລາວ ຂາເຂົ້າ-ຂາອອກ ຈຳກັດ, ຊື່ໃໝ່: ທະນາຄານ ລາວພັດທະນາການກະເສດ ຈຳກັດ)

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສື ສະເໜີໃຫ້ລຶບລ້າງໃບທະບຽນວິສາຫະກິດ ທະນາຄານ ລາວພັດທະນາການກະເສດ ຈຳກັດ ຂອງ ກົມຄຸ້ມຄອງທະນາຄານທຸລະກິດ (ທະນາຄານ ແຫ່ງ ສປປ ລາວ) ເລກທີ 601/ກຄທ, ລົງວັນທີ 15 ສິງຫາ 2014;
- ອີງຕາມ ໜັງສືແຈ້ງໂຈະການເຄື່ອນໄຫວຫົວໜ່ວຍທຸລະກິດ ຂອງກົມສ່ວຍສາອາກອນ (ກະຊວງການເງິນ) ເລກທີ 6178/ກງ.ກສອ, ລົງວັນທີ 01 ກັນຍາ 2014;
- ອີງຕາມ ແຈ້ງການ ເລື່ອງການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພນ, ລົງວັນທີ 09 ກັນຍາ 2011;

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງໃຫ້ເຈົ້າຂອງວິສາຫະກິດທີ່ກ່ຽວຂ້ອງ, ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດ ທົ່ວປະເທດ ໄດ້ຮັບຊາບວ່າ:

1. ທະນາຄານ ລາວພັດທະນາການກະເສດ ຈຳກັດ, ທະບຽນວິສາຫະກິດ ເລກທີ 157/ຈທວ, ລົງວັນທີ 08 ເມສາ 2014, ມີທີ່ຕັ້ງສຳນັກງານຕັ້ງຢູ່ ຖະໜົນ ຫຼວງພະບາງ, ບ້ານ ວັດໄຕນ້ອຍທ່າ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ໂທລະສັບ 020 54624286 **ໄດ້ຖືກໂຈະການດຳເນີນທຸລະກິດຖາວອນ** ໃນປະເພດທຸລະກິດຕາມທີ່ໄດ້ບົ່ງໄວ້ ໃນດ້ານຫຼັງໃບທະບຽນວິສາຫະກິດຕາມເຫດຜົນໃນໜັງສື ສະບັບເລກທີ 601/ກຄທ, ລົງວັນທີ 15 ສິງຫາ 2014 ແລະ ເລກທີ 6178/ກງ.ກສອ, ລົງວັນທີ 01 ກັນຍາ 2014 (ໄດ້ຕິດຄັດມາພ້ອມນີ້);

2. ການໂຈະການດຳເນີນທຸລະກິດຖາວອນ: ເລີ່ມແຕ່ວັນທີ 20 ຕຸລາ 2014 ເປັນຕົ້ນໄປ;

3. ການໂຈະການດຳເນີນທຸລະກິດຖາວອນນີ້ ວິສາຫະກິດບໍ່ສາມາດເຄື່ອນໄຫວດຳເນີນທຸລະກິດໄດ້ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ (ຕົ້ນສະບັບ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເກັບຮັກສາໄວ້; ຖ້າຫາກ ລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ ຈະຖືກປະຕິບັດມາດຕະການ ຕາມ ມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ໃຫ້ຍຸບເລີກ ຕາມຂັ້ນຕອນລະບຽບກົດໝາຍ;

4. ໃຫ້ຜູ້ອຳນວຍການ ທະນາຄານ ລາວພັດທະນາການກະເສດ ຈຳກັດ ເຂົ້າມາພົບເຈົ້າໜ້າທີ່ທະບຽນວິສາຫະກິດ (ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ) ເພື່ອປະຕິບັດຕາມຂັ້ນຕອນກົດໝາຍ.

ແຈ້ງມາເພື່ອຊາບ ແລະ ປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ກະຊວງອຸດສາຫະກຳ ແລະ ການຄ້າ
ເຈົ້າໜ້າທີ່
ທະບຽນວິສາຫະກິດ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ຫຸມແພງ ຄຳພາສິດ
Houmpheng KHAMPHASITH

ບ່ອນສົ່ງ

- ຫ້ອງວ່າການລັດຖະບານ — 1 ສະບັບ;
- ທະນາຄານ ແຫ່ງ ສປປ ລາວ — 1 ສະບັບ;
- ທະນາຄານ ລາວພັດທະນາການກະເສດ ຈຳກັດ — 1 ສະບັບ;
- ກົມສ່ວຍສາອາກອນ — 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳ — 1 ສະບັບ;
- ຫ້ອງວ່າການນະຄອນຫຼວງ — 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ — 1 ສະບັບ;
- ສຳເນົາ — 1 ສະບັບ.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ພະແນກຄຸ້ມຄອງການເຄື່ອນໄຫວວິສາຫະກິດ
ໂທລະສັບ 021 412011